ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງການເງິນ

ເລກທີ 0875 /ກງ

ນະຄອນຫລວງວຽງຈັນ, ວັນທີ 16 ກຸມພາ 2021

# ຂໍ້ຕົກລົງ

## ວ່າດ້ວຍ ການອະນຸຍາດດຳເນີນ ວິສາຫະກິດບັນຊີ, ວິສາຫະກິດກວດສອບ ແລະ ນັກກວດສອບຕາມກົດໝາຍ

- ອີງຕາມ ກົດໝາຍວ່າດ້ວຍ ການກວດສອບອິດສະລະ ສະບັບເລກທີ 51/ສພຊ, ລົງວັນທີ 22 ກໍລະກົດ 2014;
- ອີງຕາມ ດຳລັດຂອງນາຍົກລັດຖະມົນຕີ ສະບັບເລກທີ 144/ນຍ, ລົງວັນທີ 08 ພຶດສະພາ 2017 ວ່າດ້ວຍ ການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງການເງິນ;
- ອີງຕາມ ດຳລັດວ່າດ້ວຍ ການຮັບຮອງເອົາກົດຈະການຄວບຄຸມ ແລະ ສຳປະທານ ຂອງສປປ ລາວ ສະບັບເລກທີ 03/ນຍ, ລົງວັນທີ 10 ມັງກອນ 2019;
- ອີງຕາມ ໜັງສືສະເໜີ ຂອງກົມບັນຊີ ສະບັບເລກທີ 024/ກບຊ, ລົງວັນທີ 12 ມັງກອນ 2021.

## ລັດຖະມົນຕີ ກະຊວງການເງິນ ອອກຂໍ້ຕົກລົງ :

## ໝວດທີ 1
## ບົດບັນຍັດທົ່ວໄປ

### ມາດຕາ 1 ຈຸດປະສົງ

ຂໍ້ຕົກລົງສະບັບນີ້ ກຳນົດ ຫຼັກການ, ລະບຽບການ, ເງື່ອນໄຂ ແລະ ມາດຕະການ ກ່ຽວກັບ ການອອກອະນຸຍາດ ດຳເນີນວິສາຫະກິດບັນຊີ, ດຳເນີນວິສາຫະກິດກວດສອບ ແລະ ນັກກວດສອບຕາມກົດໝາຍ ເພື່ອເຮັດໃຫ້ການຄຸ້ມຄອງ, ຊຸກຍູ້, ຕິດຕາມ ແລະ ກວດກາ ການເຄື່ອນໄຫວໃຫ້ບໍລິການ ບັນຊີ ແລະ ກວດສອບ ຢູ່ ສປປ ລາວ ມີຄວາມຖືກຕ້ອງ, ໂປ່ງໃສ, ມີປະສິດທິຜົນ ແລະ ເປັນເອກະພາບ ໃນຂອບເຂດທົ່ວປະເທດ.

### ມາດຕາ 2 ການດຳເນີນວິສາຫະກິດບັນຊີ.

ການດຳເນີນວິສາຫະກິດບັນຊີ ແມ່ນການເຄື່ອນໄຫວທຸລະກິດ ໃນການໃຫ້ບໍລິການວິຊາຊີບດ້ານບັນຊີ ແລະ ບໍລິການອື່ນໆທີ່ກ່ຽວຂ້ອງ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍ ການກວດສອບອິດສະລະ ໃຫ້ແກ່ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ໃນການຈັດຕັ້ງປະຕິບັດວຽກງານບັນຊີ ໃຫ້ຖືກຕ້ອງ, ສອດຄ່ອງກັບລະບຽບກົດໝາຍ ແລະ ມາດຕະຖານການລາຍງານການເງິນ ທີ່ປະກາດໃຊ້ ແຕ່ລະໄລຍະ.

**ມາດຕາ 3 ການດຳເນີນວິສາຫະກິດກວດສອບ.**

ການດຳເນີນວິສາຫະກິດກວດສອບ ແມ່ນການເຄື່ອນໄຫວດຳເນີນທຸລະກິດ ໃນການໃຫ້ບໍລິການວິຊາຊີບດ້ານບັນຊີ, ການກວດສອບ ແລະ ບໍລິການອື່ນໆທີ່ກ່ຽວຂ້ອງ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍ ການກວດສອບອິດສະລະ ໃຫ້ແກ່ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ໃນການປະຕິບັດວຽກງານບັນຊີ ແລະ ວຽກງານອື່ນທີ່ກ່ຽວຂ້ອງ ໃຫ້ຖືກຕ້ອງ, ສອດຄ່ອງກັບລະບຽບກົດໝາຍ, ມາດຕະຖານວິຊາຊີບດ້ານການກວດສອບ ແລະ ມາດຕະຖານການລາຍງານການເງິນ ທີ່ປະກາດໃຊ້ ແຕ່ລະໄລຍະ.

**ມາດຕາ 4 ນັກກວດສອບຕາມກົດໝາຍ**

ນັກກວດສອບຕາມກົດໝາຍ ແມ່ນບຸກຄົນ ທີ່ສາມາດລົງລາຍເຊັນໃສ່ບົດລາຍງານການກວດສອບເອກະສານລາຍງານການເງິນ ຂອງເປົ້າໝາຍຖືກກວດສອບຕາມກົດໝາຍ ແລະ ເປົ້າໝາຍຖືກກວດສອບຕາມຄວາມສະໝັກໃຈ ແລະ ວຽກງານອື່ນທີ່ກ່ຽວຂ້ອງ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍ ການກວດສອບອິດສະລະ.

**ມາດຕາ 5 ຂອບເຂດການນຳໃຊ້**

ຂໍ້ຕົກລົງສະບັບນີ້ ນຳໃຊ້ສຳລັບ ບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ທີ່ເຄື່ອນໄຫວວຽກງານ ກ່ຽວກັບ ບັນຊີ ແລະ ກວດສອບອິດສະລະ ຢູ່ ສປປ ລາວ.

## ໝວດທີ 2
## ເງື່ອນໄຂການອະນຸຍາດ ດຳເນີນວິສາຫະກິດບັນຊີ, ວິສາຫະກິດກວດສອບ ແລະ ນັກກວດສອບຕາມກົດໝາຍ

**ມາດຕາ 6 ເງື່ອນໄຂການອະນຸຍາດດຳເນີນວິສາຫະກິດບັນຊີ**

ບຸກຄົນ, ນິຕິບຸກຄົນ ທີ່ມີຈຸດປະສົງຂໍອະນຸຍາດດຳເນີນວິສາຫະກິດບັນຊີ ຕ້ອງມີເງື່ອນໄຂຄົບຖ້ວນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍ ການກວດສອບອິດສະລະ ດັ່ງນີ້:

1. ເປັນນັກຊ່ຽວຊານບັນຊີ;
2. ເປັນສະມາຊິກຂອງສະພາວິຊາຊີບນັກບັນຊີ ແລະ ນັກກວດສອບ;
3. ບໍ່ເປັນລັດຖະກອນ, ບໍ່ເປັນເຈົ້າຂອງ, ບໍ່ເປັນຂາຮຸ້ນ ຫຼື ພະນັກງານ ຂອງວິສາຫະກິດໃດໜຶ່ງ;
4. ບໍ່ເຄີຍຖືກລົງວິໄນ ຫຼື ສານຕັດສິນລົງໂທດ ໃນສະຖານສໍ້ໂກງ ຫຼື ກະທຳຜິດທາງດ້ານການເງິນ, ການບັນຊີ;
5. ມີພະນັກງານ ດ້ານບັນຊີ-ການເງິນ ລະດັບຊັ້ນສູງ ຢ່າງໜ້ອຍສາມຄົນຂຶ້ນໄປ;
6. ບໍ່ເຄີຍຖືກຖອນໃບອະນຸຍາດດຳເນີນທຸລະກິດ ບັນຊີ ແລະ ກວດສອບ.

**ມາດຕາ 7 ເງື່ອນໄຂການອະນຸຍາດດຳເນີນວິສາຫະກິດກວດສອບ**

ບຸກຄົນ, ນິຕິບຸກຄົນ ທີ່ມີຈຸດປະສົງຂໍອະນຸຍາດດຳເນີນວິສາຫະກິດກວດສອບ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍ ການກວດສອບອິດສະລະ ຕ້ອງມີເງື່ອນໄຂ ດັ່ງນີ້:

1. ເປັນນັກຊ່ຽວຊານບັນຊີ;
2. ເປັນສະມາຊິກຂອງສະພາວິຊາຊີບນັກບັນຊີ ແລະ ນັກກວດສອບ;

3. ບໍ່ເປັນລັດຖະກອນ, ບໍ່ເປັນເຈົ້າຂອງ, ບໍ່ເປັນຂາຮຸ້ນ ຫຼື ພະນັກງານ ຂອງວິສາຫະກິດໃດໜຶ່ງ;
4. ບໍ່ເຄີຍຖືກລົງວິໄນ ຫຼື ສານຕັດສິນລົງໂທດ ໃນສະຖານສໍ້ໂກງ ຫຼື ກະທຳຜິດທາງດ້ານການເງິນ, ການບັນຊີ;
5. ກໍລະນີຄົນຕ່າງປະເທດຕ້ອງມີ ໃບຢັ້ງຢືນກ່ຽວກັບການປະກອບອາຊີບ ຈາກອົງການວິຊາຊີບປະເທດທີ່ຕົນໄດ້ເຄື່ອນໄຫວທາງດ້ານວິຊາຊີບ;
6. ມີພະນັກງານເປັນນັກຊ່ຽວຊານບັນຊີ ຢ່າງໜ້ອຍ ສອງຄົນຂຶ້ນໄປ ແລະ ມີຈຳນວນພະນັກງານດ້ານບັນຊີ-ການເງິນ ລະດັບຂັ້ນສູງຂຶ້ນໄປກໍລະນີວິສາຫະກິດສ່ວນບຸກຄົນ;
7. ມີຂາຮຸ້ນ ຢ່າງໜ້ອຍສາມສ່ວນຫ້າ ຂອງຜູ້ຖືຮຸ້ນທັງໝົດ ເປັນນັກຊ່ຽວຊານບັນຊີ ແລະ ຜູ້ບໍລິຫານ ແລະ ພະນັກງານລະດັບຂັ້ນສູງຂຶ້ນໄປ ກໍລະນີ ຂາຮຸ້ນສອງຄົນຂຶ້ນໄປ;
8. ບໍ່ເຄີຍຖືກຖອນໃບອະນຸຍາດດຳເນີນທຸລະກິດ ບັນຊີ ແລະ ກວດສອບ.

ສຳລັບ ວິສາຫະກິດກວດສອບຕ່າງປະເທດ ໃຫ້ປະຕິບັດຕາມເງື່ອນໄຂຂ້າງເທິງ ແລະ ຕ້ອງປະຕິບັດເພີ່ມເຕີມ ດັ່ງນີ້:

1. ກຸ່ມບໍລິສັດ ຫຼື ບໍລິສັດແມ່ ມີປະຫວັດການເຄື່ອນໄຫວທີ່ດີ ແລະ ມີຊື່ສຽງ ໃນລະດັບພາກພື້ນ ແລະ ສາກົນ;
2. ຜູ້ອຳນວຍການສາຂາ ຫຼື ຫ້ອງການຜູ້ຕາງໜ້າ ປະຈຳ ສປປ ລາວ ຕ້ອງເປັນນັກຊ່ຽວຊານບັນຊີ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍ ການກວດສອບອິດສະລະ;
3. ມີໃບຢັ້ງຢືນມອບກຳມະສິດ ໃຫ້ສ້າງຕັ້ງສາຂາ ຫຼື ຫ້ອງການຜູ້ຕາງໜ້າ ແລະ ຜູ້ຮັບຜິດຊອບວຽກງານ ປະຈຳຢູ່ ສປປ ລາວ;
4. ມີພະນັກງານວິຊາການຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ ຂອງຂະແໜງແຮງງານ ແລະ ສະຫວັດດີການສັງຄົມ;
5. ເອກະສານອື່ນທີ່ກ່ຽວຂ້ອງ.

**ມາດຕາ 8 ເງື່ອນໄຂການອະນຸຍາດ ນັກກວດສອບຕາມກົດໝາຍ**

ບຸກຄົນທີ່ຈະເປັນນັກກວດສອບຕາມກົດໝາຍ ຕ້ອງເປັນນັກຊ່ຽວຊານບັນຊີ ມີຕຳແໜ່ງເປັນຜູ້ອຳນວຍການ ຫຼື ຜູ້ຮຸ້ນສ່ວນຮັບຜິດຊອບງານ ຂອງວິສາຫະກິດກວດສອບ.

## ໝວດທີ 3
## ຂັ້ນຕອນການອະນຸຍາດດຳເນີນ ວິສາຫະກິດບັນຊີ, ວິສາຫະກິດກວດສອບ ແລະ ນັກກວດສອບຕາມກົດໝາຍ

**ມາດຕາ 9 ການສ້າງຕັ້ງ ວິສາຫະກິດບັນຊີ ແລະ ວິສາຫະກິດກວດສອບ**

ບຸກຄົນ, ນິຕິບຸກຄົນ ທີ່ມີຈຸດປະສົງ ດຳເນີນວິສາຫະກິດບັນຊີ ແລະ ວິສາຫະກິດກວດສອບ ຢູ່ ສປປ ລາວ ໃຫ້ຍື່ນຄຳຮ້ອງ ຕໍ່ຫ້ອງການບໍລິການ ການລົງທຶນປະຕູດຽວ ຂອງຂະແໜງແຜນການ ແລະ ການລົງທຶນ.

**ມາດຕາ 10 ການປະກອບເອກະສານ ສໍາລັບວິສາຫະກິດບັນຊີ ແລະ ວິສາຫະກິດກວດສອບ**

ບຸກຄົນ, ນິຕິບຸກຄົນ ທີ່ສະເໜີຂໍສ້າງຕັ້ງ ວິສາຫະກິດບັນຊີ ແລະ ວິສາຫະກິດກວດສອບ ພາຍຫລັງທີ່ໄດ້ຮັບໃບອະນຸຍາດລົງທຶນ ຈາກຂະແໜງແຜນການ ແລະ ການລົງທຶນ ແລະ ໃບທະບຽນວິສາຫະກິດ ຈາກຂະແໜງອຸດສະຫະກໍາ ແລະ ການຄ້າແລ້ວ ຕ້ອງໄດ້ປະກອບເອກະສານ ເພີ່ມເຕີມຕາມທີ່ກະຊວງການເງິນ ກໍານົດອອກ ດັ່ງນີ້:

1. ໃບຄໍາຮ້ອງ ຕາມແບບພອມ ຂອງກະຊວງການເງິນ 01 ສະບັບ;
2. ສໍາເນົາໃບຢັ້ງຢືນການເປັນນັກຊ່ຽວຊານບັນຊີ 01 ສະບັບ;
3. ຊີວະປະຫວັດ ຕາມແບບພອມຂອງກະຊວງການເງິນ (ສໍາລັບນັກຊ່ຽວຊານບັນຊີ) 01 ຊຸດ/ 1 ຄົນ;
4. ໃບຢັ້ງຢືນການສິ້ນສຸດການເປັນພະນັກງານ ຂອງອົງການຈັດຕັ້ງ ຫຼື ວິສາຫະກິດໃດໜຶ່ງ 01 ສະບັບ;
5. ສໍາເນົາໃບຢັ້ງຢືນການເປັນສະມາຊິກ ສະພາວິຊາຊີບນັກບັນຊີ ແລະ ນັກກວດສອບ 01 ສະບັບ;
6. ສໍາເນົາ ບັດປະຈໍາຕົວ ຫຼື ໜັງສືຜ່ານແດນ (Passaport) 01 ສະບັບ;
7. ຮູບຖ່າຍຜູ້ອໍານວຍການ ຂະໜາດ 3x4 (ຮູບຖ່າຍບໍ່ເກີນສາມເດືອນ) 02 ໃບ.

- ກໍລະນີ ເປັນວິສາຫະກິດກວດສອບຕ່າງປະເທດ ຕ້ອງປະກອບເອກະສານເພີ່ມເຕີມ ດັ່ງນີ້:

1. ບົດລາຍງານສະພາບການເຄື່ອນໄຫວຂອງບໍລິສັດແມ່ ໄລຍະຜ່ານມາ 01 ຊຸດ;
2. ເອກະສານຢັ້ງຢືນການມອບສິດ ຂອງບໍລິສັດແມ່ 01 ສະບັບ;
3. ໜັງສືແຕ່ງຕັ້ງບຸກຄົນຮັບຜິດຊອບ ຫຼື ຮັບໜ້າທີ່ປະຈໍາຢູ່ ສປປ ລາວ ຂອງບໍລິສັດແມ່ 01 ສະບັບ.

**ມາດຕາ 11 ການປະກອບເອກະສານ ສໍາລັບນັກກວດສອບຕາມກົດໝາຍ**

ບຸກຄົນ ທີ່ຈະເປັນນັກກວດສອບຕາມກົດໝາຍ ຕ້ອງປະກອບເອກະສານ ສົ່ງໃຫ້ກະຊວງການເງິນ ດັ່ງນີ້ :

1. ໃບຄໍາຮ້ອງ ຕາມແບບພອມ ຂອງກະຊວງການເງິນ 01 ສະບັບ;
2. ສໍາເນົາໃບຢັ້ງຢືນນັກຊ່ຽວຊານບັນຊີ 01 ສະບັບ;
3. ສໍາເນົາໃບຢັ້ງຢືນເປັນສະມາຊິກ ຂອງສະພາວິຊາຊີບນັກບັນຊີ ແລະ ນັກກວດສອບ 01 ສະບັບ;
4. ໜັງສືຢັ້ງຢືນ ເປັນຜູ້ອໍານວຍການ ຫຼື ຜູ້ຮັບຜິດຊອບງານ ຈາກວິສາຫະກິດກວດສອບທີ່ຕົນສັງກັດ 01 ສະບັບ;
5. ສໍາເນົາໃບອະນຸຍາດດໍາເນີນທຸລະກິດ ຂອງວິສາຫະກິດກວດສອບ 01 ສະບັບ;
6. ຮູບຖ່າຍ ຂະໜາດ 3x4 (ຮູບຖ່າຍບໍ່ເກີນສາມເດືອນ) 02 ໃບ;
7. ສໍາເນົາ ບັດປະຈໍາຕົວ ຫຼື ໜັງສືຜ່ານແດນ (Passaport) 01 ສະບັບ.

**ມາດຕາ 12 ການພິຈາລະນາອະນຸຍາດດໍາເນີນ ວິສາຫະກິດບັນຊີ ແລະ ວິສາຫະກິດກວດສອບ**

ກະຊວງການເງິນ ຈະພິຈາລະນາອອກອະນຸຍາດດໍາເນີນ ວິສາຫະກິດບັນຊີ ແລະ ວິສາຫະກິດກວດສອບ ພາຍໃນ ສິບ ວັນລັດຖະການ ເມື່ອເຫັນວ່າມີເງື່ອນໄຂຄົບຖ້ວນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍວ່າດ້ວຍ ການກວດສອບອິດສະລະ ແລະ ມາດຕາ 6, 7, 9 ແລະ 10 ຂອງຂໍ້ຕົກລົງສະບັບນີ້.

ໃນກໍລະນີ ເຫັນດີອອກໃບອະນຸຍາດດຳເນີນທຸລະກິດ ບັນຊີ ແລະ ກວດສອບ, ກະຊວງການເງິນ ຈະແຈ້ງຕອບພາກສ່ວນທີ່ກ່ຽວຂ້ອງ ແລະ ພິຈາລະນາ ອອກໃບອະນຸຍາດດຳເນີນ ທຸລະກິດບັນຊີ ຫຼື ທຸລະກິດກວດສອບ ຕາມລະບຽບການ, ຖ້າກໍລະນີ ບໍ່ເຫັນດີ ກະຊວງການເງິນ ຈະແຈ້ງຕອບເປັນລາຍລັກອັກສອນ ພ້ອມທັງອະທິບາຍເຫດຜົນ ໃຫ້ຜູ້ຮ້ອງຂໍ ແລະ ເຮັດສະໂໜດນຳສົ່ງທາ ຂະແໜງແຜນການ ແລະ ການລົງທຶນ.

**ມາດຕາ 13 ການພິຈາລະນາ ອະນຸຍາດນັກກວດສອບຕາມກົດໝາຍ**

ພາຍຫຼັງ ບຸກຄົນ, ນິຕິບຸກຄົນ ໄດ້ຮັບອະນຸຍາດດຳເນີນວິສາຫະກິດກວດສອບ ແລະ ໄດ້ຂຶ້ນທະບຽນວິສາຫະກິດ ຖືກຕ້ອງຕາມລະບຽບກົດໝາຍແລ້ວ, ພາຍໃນກຳນົດເວລາ ສາມສິບວັນ ຜູ້ອຳນວຍການ ຫຼື ຜູ້ຮຸ້ນສ່ວນຮັບຜິດຊອບງານ ຕ້ອງໄດ້ຂໍອະນຸຍາດເປັນນັກກວດສອບຕາມກົດໝາຍ ຈາກກະຊວງການເງິນ.

ສຳລັບວິສາຫະກິດກວດສອບ ທີ່ໄດ້ເຄື່ອນໄຫວຜ່ານມາແລ້ວ, ຜູ້ອຳນວຍການ ຫຼື ຜູ້ຮຸ້ນສ່ວນຮັບຜິດຊອບງານ ຍັງບໍ່ທັນໄດ້ຈົດທະບຽນເປັນນັກກວດສອບຕາມກົດໝາຍ ຕ້ອງໄດ້ຂໍອະນຸຍາດເປັນນັກກວດສອບຕາມກົດໝາຍ ຈາກກະຊວງການເງິນ.

## ໝວດທີ 4
## ການສ້າງຕັ້ງສາຂາ

**ມາດຕາ 14 ການສ້າງຕັ້ງສາຂາ**

ວິສາຫະກິດບັນຊີ ແລະ ວິສາຫະກິດກວດສອບ ທີ່ໄດ້ຮັບອະນຸຍາດຖືກຕ້ອງຕາມກົດໝາຍ ມີຈຸດປະສົງສ້າງຕັ້ງສາຂາ ຢູ່ບັນດາແຂວງ, ນະຄອນຫຼວງ ໃນຂອບເຂດທົ່ວປະເທດ ຕ້ອງມີເງື່ອນໄຂຄົບຖ້ວນຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍ ການກວດສອບອິດສະລະ ແລະ ມາດຕາ 6, 7 ຂອງຂໍ້ຕົກລົງສະບັບນີ້ ແລະ ຕ້ອງໄດ້ຮັບອະນຸຍາດຈາກ ກົມບັນຊີ ກະຊວງການເງິນ.

**ມາດຕາ 15 ເງື່ອນໄຂການສ້າງຕັ້ງສາຂາ**

ວິສາຫະກິດບັນຊີ ແລະ ວິສາຫະກິດກວດສອບ ສາມາດສ້າງຕັ້ງສາຂາຂອງຕົນຢູ່ໃນຂອບເຂດທົ່ວປະເທດ ແຕ່ລະສາຂາຕ້ອງປະຕິບັດຕາມເງື່ອນໄຂທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍ ການກວດສອບອິດສະລະ ແລະ ມາດຕາ 4, 5 ຂອງຂໍ້ຕົກລົງສະບັບນີ້ ແລະ ຍັງຕ້ອງປະຕິບັດຕາມ 5 ເງື່ອນໄຂ ດັ່ງນີ້ :

1. ຜູ້ຈັດການສາຂາ ຕ້ອງເປັນນັກຊ່ຽວຊານບັນຊີ;
2. ມີແຜນການເຄື່ອນໄຫວສາຂາ ຂອງວິສາຫະກິດບັນຊີ ແລະ ວິສາຫະກິດກວດສອບ ຢ່າງຕ່ຳສາມປີ;
3. ມີຫ້ອງການປະຈຳ;
4. ມີກົງຈັກການຈັດຕັ້ງວຽກງານສະເພາະຂອງສາຂາ;
5. ມີພະນັກງານບັນຊີ-ການເງິນ ຢ່າງໜ້ອຍ ສອງ ຄົນຂຶ້ນໄປ.

**ມາດຕາ 16 ການປະກອບເອກະສານໃນການສ້າງຕັ້ງສາຂາ**

ວິສາຫະກິດບັນຊີ ແລະ ວິສາຫະກິດກວດສອບ ທີ່ມີຈຸດປະສົງສ້າງຕັ້ງສາຂາຂອງບໍລິສັດຕົນ ຕ້ອງປະກອບເອກະສານ ດັ່ງນີ້:

1. ໃບຄຳຮ້ອງຕາມແບບຟອມ ຂອງກະຊວງການເງິນ 01 ສະບັບ;

2. ໃບແຕ່ງຕັ້ງຜູ້ຈັດການສາຂາ ຈາກຜູ້ອໍານວຍການ ສໍານັກງານໃຫຍ່ 01 ສະບັບ;
3. ແຜນການເຄື່ອນໄຫວຂອງສາຂາ ສາມປີທໍາອິດ 01 ສະບັບ;
4. ລະບຽບ ກ່ຽວກັບ ການຄຸ້ມຄອງສາຂາ ຂອງວິສາຫະກິດ ບັນຊີ ແລະ ກວດສອບ 01 ສະບັບ;
5. ສໍາເນົາໃບຢັ້ງຢືນດ້ານວິຊາຊີບ ຫຼື ວຸດທິການສຶກສາ 01 ຊຸດ;
6. ໃບແຈ້ງໂທດ ເລກທີ 3 01 ສະບັບ;
7. ຊີວະປະຫວັດ ຂອງຜູ້ຈັດການສາຂາ ຕາມແບບຟອມ ຂອງກະຊວງການເງິນ 01 ສະບັບ.

**ມາດຕາ 17 ການພິຈາລະນາສ້າງຕັ້ງສາຂາ**

ກົມບັນຊີ ກະຊວງການເງິນ ຈະພິຈາລະນາການອອກໃບອະນຸຍາດສ້າງຕັ້ງສາຂາ ໃຫ້ວິສາຫະກິດບັນຊີ ແລະ ວິສາຫະກິດກວດສອບ ພາຍໃນກໍານົດ ສິບ ວັນລັດຖະການ ນັບແຕ່ວັນໄດ້ຮັບເອກະສານຈາກຜູ້ຮ້ອງຂໍ ຖ້າເຫັນວ່າມີເງື່ອນໄຂຄົບຖ້ວນຕາມທີ່ໄດ້ກໍານົດໄວ້ໃນມາດຕາ 12, 13 ແລະ 14 ຂອງຂໍ້ຕົກລົງສະບັບນີ້. ກໍລະນີ, ຫາກເຫັນວ່າ ບໍ່ມີເງື່ອນໄຂຄົບຖ້ວນຕາມທີ່ໄດ້ກໍານົດໄວ້ໃນມາດຕາ 12, 13 ແລະ 14 ຂອງຂໍ້ຕົກລົງສະບັບນີ້ ກົມບັນຊີ ກະຊວງການເງິນ ຈະແຈ້ງຕອບເປັນລາຍລັກອັກສອນ ພ້ອມທັງອະທິບາຍເຫດຜົນໃຫ້ແກ່ຜູ້ຮ້ອງຂໍ ຕາມລະບຽບການ.

## ໝວດທີ 5
## ຂັ້ນຕອນການອອກໃບຕິດຕາມການດໍາເນີນທຸລະກິດ ບັນຊີ ແລະ ກວດສອບ ປະຈໍາປີ

**ມາດຕາ 18 ການລາຍງານປະຈໍາປີ**

ວິສາຫະກິດບັນຊີ ແລະ ວິສາຫະກິດກວດສອບ ລວມທັງສາຂາ ແລະ ຫ້ອງການປະຈໍາການ (ຖ້າມີ) ຕ້ອງລາຍງານຜົນການດໍາເນີນງານ ໃຫ້ກະຊວງການເງິນ ຢ່າງເປັນປົກກະຕິ ພາຍໃນກໍານົດເວລາ ເກົ້າສິບວັນ ນັບແຕ່ມື້ປິດບັນຊີປະຈໍາປີ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍວ່າດ້ວຍ ການກວດສອບອິດສະລະ.

**ມາດຕາ 19 ການປະກອບເອກະສານລາຍງານປະຈໍາປີ**

ວິສາຫະກິດບັນຊີ ແລະ ວິສາຫະກິດກວດສອບ ລວມທັງສາຂາ ຕ້ອງປະກອບເອກະສານໃຫ້ຄົບຖ້ວນຕາມແບບຟອມ ຂອງກະຊວງການເງິນກໍານົດ ຊຶ່ງປະກອບມີ ດັ່ງນີ້:

1. ໜັງສືສະເໜີ;
2. ບົດລາຍງານການເຄື່ອນໄຫວປະຈໍາປີ: ສະຖິຕິພະນັກງານ, ເອກະສານລາຍງານການເງິນ, ສັນຍາບໍລິການ, ສະຖິຕິລູກຄ້າ ແລະ ການບໍລິການອື່ນໆ;
3. ໃບຕິດຕາມການດໍາເນີນ ທຸລະກິດບັນຊີ, ທຸລະກິດກວດສອບ ແລະ ສາຂາ ປີຜ່ານມາ;
4. ສໍາເນົາໃບທະບຽນວິສາຫະກິດ ແລະ ໃບອະນຸຍາດດໍາເນີນ ທຸລະກິດບັນຊີ, ທຸລະກິດກວດສອບ ແລະ ສາຂາ ກໍລະນີ ມີການປ່ຽນແປງເນື້ອໃນ;
5. ໃບຢັ້ງຢືນການມອບພັນທະລ່ວງລາອາກອນ;
6. ໃບຢັ້ງຢືນການປະຕິບັດພັນທະວິຊາຊີບ ຂອງສະພາວິຊາຊີບ ນັກບັນຊີ ແລະ ນັກກວດສອບ;
7. ການປະກັນໄພຄ່າເສຍຫາຍດ້ານວິຊາຊີບ (ສໍາລັບວິສາຫະກິດກວດສອບ);
8. ບົດລາຍງານການຍົກລະດັບວິຊາຊີບ ໃຫ້ພະນັກງານພາຍໃນບໍລິສັດ;

9. ບົດລາຍງານຄວາມໂປ່ງໃສ ສໍາລັບວິສາຫະກິດກວດສອບ.

**ມາດຕາ 20 ການຕິດຕາມ ກວດກາ ການດໍາເນີນວິສາຫະກິດ ບັນຊີ ແລະ ກວດສອບ**

ການຕິດຕາມ ກວດກາ ການດໍາເນີນວິສາຫະກິດ ບັນຊີ ແລະ ກວດສອບ ແມ່ນເພື່ອໃຫ້ການບໍລິການທາງດ້ານການບັນຊີ ແລະ ການກວດສອບອິດສະລະ ຂອງວິສາຫະກິດ ບັນຊີ ແລະ ກວດສອບ ໃຫ້ມີຄວາມຖືກຕ້ອງ ແລະ ສອດຄ່ອງ ຕາມມາດຕະຖານວິຊາຊີບດ້ານການກວດສອບ, ມາດຕະຖານການລາຍງານການເງິນ, ຈັນຍາບັນດ້ານວິຊາຊີບ ແລະ ລະບຽບກົດໝາຍອື່ນໆທີ່ກ່ຽວຂ້ອງ ທີ່ໄດ້ປະກາດໃຊ້ ແຕ່ລະໄລຍະ.

ການຕິດຕາມ ກວດກາ ການດໍາເນີນວິສາຫະກິດ ບັນຊີ ແລະ ກວດສອບ ປະກອບມີ ສອງ ຮູບແບບ ຄື: ການຕິດຕາມ ກວດກາ ຕາມເອກະສານ ແລະ ຕິດຕາມ ກວດກາກັບທີ່.

**ມາດຕາ 21 ການຕິດຕາມ ກວດກາ ຕາມເອກະສານ**

ການຕິດຕາມ ກວດກາ ຕາມເອກະສານ ແມ່ນການກວດກາ ບົດລາຍງານຜົນການດໍາເນີນງານປະຈໍາປີ ແລະ ບັນດາເອກະສານຕ່າງໆ ທີ່ວິສາຫະກິດ ບັນຊີ ແລະ ກວດສອບ ໄດ້ສົ່ງໃຫ້ກົມບັນຊີ ກະຊວງການເງິນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍວ່າດ້ວຍ ການກວດສອບອິດສະລະ ແລະ ມາດຕາ 17, 18 ແລະ 19 ຂອງ ຂໍ້ຕົກລົງສະບັບນີ້ ເພື່ອເປັນບ່ອນອີງໃນການອອກໃບຕິດຕາມການດໍາເນີນທຸລະກິດປະຈໍາປີ. ໃນກໍລະນີເຫັນວ່າ ເອກະສານບໍ່ຄົບຖ້ວນ ຫຼື ມີຂໍ້ສົງໄສ ຕ້ອງໄດ້ສະເໜີໃຫ້ວິສາຫະກິດປະກອບເອກະສານເພີ່ມເຕີມ ແລະ/ຫຼື ໃຫ້ວິສາຫະກິດເຂົ້າມາອະທິບາຍ ແລະ ຊີ້ແຈງເຫດຜົນ.

**ມາດຕາ 22 ການຕິດຕາມ ກວດກາກັບທີ່**

ການຕິດຕາມ ກວດກາກັບທີ່ ແມ່ນການລົງຕິດຕາມ ກວດກາ ການຈັດຕັ້ງປະຕິບັດກົດໝາຍ, ລະບຽບການຕ່າງໆ, ມາດຕະຖານ ກ່ຽວກັບ ວຽກງານບັນຊີ ແລະ ກວດສອບອິດສະລະ ກັບທີ່ຢູ່ຫ້ອງການຂອງວິສາຫະກິດບັນຊີ ແລະ ວິສາຫະກິດກວດສອບ ຫຼື ຫ້ອງການຂອງບໍລິສັດລູກຄ້າ ກໍລະນີມີຄວາມຈໍາເປັນ ເຊັ່ນ:

- ການຈັດຕັ້ງປະຕິບັດວຽກງານບັນຊີ, ເອກະສານບັນຊີ, ການຄວບຄຸມ ແລະ ກວດສອບ ພາຍໃນ, ສະຖິຕິພະນັກງານ, ການປະຕິບັດພັນທະທາງດ້ານອາກອນ ແລະ ພັນທະຂອງສະພາວິຊາຊີບນັກບັນຊີ ແລະ ນັກກວດສອບ;
- ການໃຫ້ບໍລິການລູກຄ້າກ່ຽວກັບວຽກງານບັນຊີ ແລະ ກວດສອບ, ສະຖິຕິລູກຄ້າ ແລະ ສັນຍາການໃຫ້ບໍລິການ.

ພາຍຫຼັງ ສໍາເລັດການກວດກາ ເຈົ້າໜ້າທີ່ບັນຊີ ຕ້ອງສ້າງບົດບັນທຶກຮ່ວມກັບວິສາຫະກິດດັ່ງກ່າວ ເພື່ອເປັນຫຼັກຖານ ແລະ ເປັນພື້ນຖານໃນການຕິດຕາມ ການຈັດຕັ້ງປະຕິບັດວຽກງານບັນຊີ ແລະ ກວດສອບອິດສະລະຂອງວິສາຫະກິດບັນຊີ ແລະ ວິສາຫະກິດກວດສອບ ລວມທັງສາຂາ.

ໃນກໍລະນີ ວິສາຫະກິດບັນຊີ ແລະ ວິສາຫະກິດກວດສອບ ຫາກມີການປົດບັງ, ປອມແປງ, ທໍາລາຍ ແລະ ເຊື່ອງອໍາຂໍ້ມູນຂ່າວສານທາງດ້ານການເງິນ-ການບັນຊີ ທີ່ກໍ່ໃຫ້ເກີດຜົນເສຍຫາຍໃຫ້ແກ່ລັດ ເປັນຕົ້ນ ການຈັດເກັບລາຍຮັບທາງດ້ານສ່ວຍສາອາກອນ, ຂະແໜງບັນຊີ ຕ້ອງປະສານກັບຂະແໜງສ່ວຍສາອາກອນ ເພື່ອດໍາເນີນການກວດກາໄລ່ລຽງຄືນ ແລະ ປະຕິບັດມາດຕະການປັບໃໝ ຕາມທີ່ໄດ້ກໍານົດໄວ້ໃນລະບຽບກົດໝາຍ.

**ມາດຕາ 23 ການພິຈາລະນາ ອອກໃບຕິດຕາມການດຳເນີນທຸລະກິດ ບັນຊີ ແລະ ກວດສອບ ປະຈຳປີ**

ກົມບັນຊີ ກະຊວງການເງິນ ຈະພິຈາລະນາອອກໃບຕິດຕາມການດຳເນີນ ທຸລະກິດບັນຊີ, ທຸລະກິດກວດສອບ ແລະ ສາຂາ ປະຈຳປີ ພາຍໃນສິບຫ້າວັນລັດຖະການ ເມື່ອເຫັນວ່າວິສາຫະກິດດັ່ງກ່າວ ປະກອບເອກະສານຄົບຖ້ວນຕາມທີ່ໄດ້ກຳນົດໄວ້ໃນມາດຕາ 18, 19 ແລະ 20 ຂອງຂໍ້ຕົກລົງສະບັບນີ້.

## ໝວດທີ 6
## ການໂຈະ ແລະ ການຖອນ ໃບອະນຸຍາດດຳເນີນທຸລະກິດບັນຊີ, ທຸລະກິດກວດສອບ ແລະ ນັກກວດສອບຕາມກົດໝາຍ

**ມາດຕາ 24 ການໂຈະການເຄື່ອນໄຫວ ຂອງວິສາຫະກິດບັນຊີ ແລະ ວິສາຫະກິດກວດສອບ**

ກະຊວງການເງິນ ຈະໂຈະການເຄື່ອນໄຫວຂອງວິສາຫະກິດບັນຊີ ແລະ ວິສາຫະກິດກວດສອບ ພາຍຫຼັງໄດ້ມີການກ່າວເຕືອນເປັນລາຍລັກອັກສອນ ເວັ້ນເສຍແຕ່ກໍລະນີ ທີ່ວິສາຫະກິດຫາກສະເໜີຂໍໂຈະເອງ.

ພາຍຫຼັງ ຖືກສັ່ງໂຈະແລ້ວ ວິສາຫະກິດບັນຊີ ແລະ ວິສາຫະກິດກວດສອບ ຕ້ອງປັບປຸງຂໍ້ຄົງທີ່ຖືກສັ່ງໂຈະ ພາຍໃນກຳນົດເວລາ ສາມ ເດືອນ. ການໂຈະການເຄື່ອນໄຫວ ຂອງວິສາຫະກິດບັນຊີ ແລະ ວິສາຫະກິດກວດສອບ ຈະຖືກຍົກເລີກເມື່ອເຫັນວ່າ ວິສາຫະກິດ ບັນຊີ ແລະ ກວດສອບ ໄດ້ມີການປັບປຸງແກ້ໄຂບັນຫາຄົງຄ້າງຕາມເວລາທີ່ໄດ້ກຳນົດໄວ້.

**ມາດຕາ 25 ການຖອນ ໃບອະນຸຍາດດຳເນີນທຸລະກິດ ບັນຊີ ແລະ ກວດສອບ**

ກະຊວງການເງິນ ຈະຖອນໃບອະນຸຍາດດຳເນີນທຸລະກິດ ບັນຊີ ແລະ ກວດສອບ ໃນກໍລະນີໃດໜຶ່ງດັ່ງນີ້:

1. ຕາມການສະເໜີ ຂອງວິສາຫະກິດບັນຊີ ແລະ ວິສາຫະກິດກວດສອບເອງ;
2. ບໍ່ປັບປຸງຂໍ້ຄົງຄ້າງທີ່ຖືກສັ່ງໂຈະ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍ ການກວດສອບອິດສະລະ ແລະ ມາດຕາ 24 ຂອງຂໍ້ຕົກລົງສະບັບນີ້;
3. ບໍ່ປະຕິບັດຕາມເງື່ອນໄຂການຂໍອະນຸຍາດດຳເນີນວິສາຫະກິດບັນຊີ ແລະ ວິສາຫະກິດກວດສອບ;
4. ມີຄຳຕັດສິນຂອງສານປະຊາຊົນ ໃຫ້ຢຸດເຊົາການດຳເນີນວິສາຫະກິດບັນຊີ ແລະ ວິສາຫະກິດກວດສອບ;
5. ສືບຕໍ່ດຳເນີນການເຄື່ອນໄຫວວິຊາຊີບ ໃນໄລຍະເວລາຖືກສັ່ງໂຈະ.

ກະຊວງການເງິນ ຈະແຈ້ງການຖອນໃບອະນຸຍາດດຳເນີນທຸລະກິດ ຂອງວິສາຫະກິດບັນຊີ ແລະ ວິສາຫະກິດກວດສອບ ເປັນລາຍລັກອັກສອນ ໃຫ້ ກະຊວງອຸດສາຫະກຳ ແລະ ການຄ້າ ເພື່ອຖອນໃບທະບຽນວິສາຫະກິດ ພ້ອມກັນນັ້ນ ຕ້ອງແຈ້ງໃຫ້ວິສາຫະກິດບັນຊີ ຫຼື ວິສາຫະກິດກວດສອບ, ສະພາວິຊາຊີບນັກບັນຊີ ແລະ ນັກກວດສອບ, ຂະແໜງການທີ່ກ່ຽວຂ້ອງ ແລະ ແຈ້ງອອກສື່ມວນຊົນ.

ການຖອນໃບທະບຽນ ແລະ ໃບອະນຸຍາດດຳເນີນທຸລະກິດ ຂອງວິສາຫະກິດບັນຊີ ແລະ ວິສາຫະກິດກວດສອບ ຖືວ່າເປັນການຍຸບເລີກວິສາຫະກິດບັນຊີ ແລະ ວິສາຫະກິດກວດສອບ.

**ມາດຕາ 26 ການໂຈະ ແລະ ການຖອນໃບອະນຸຍາດດຳເນີນທຸລະກິດສາຂາ**

ການໂຈະ ແລະ ການຖອນ ໃບອະນຸຍາດດຳເນີນທຸລະກິດສາຂາ ຂອງວິສາຫະກິດບັນຊີ, ວິສາຫະກິດກວດສອບ ແມ່ນປະຕິບັດຕາມກົດໝາຍວ່າດ້ວຍ ການກວດສອບອິດສະລະ ແລະ ມາດຕາ 22, 23 ຂອງຂໍ້ຕົກລົງສະບັບນີ້.

**ມາດຕາ 27 ການໂຈະການເປັນນັກກວດສອບຕາມກົດໝາຍ**

ການໂຈະ ແລະ ການຖອນ ໃບອະນຸຍາດນັກກວດສອບຕາມກົດໝາຍ ກໍລະນີທີ່ ວິສາຫະກິດກວດສອບຖືກໂຈະໃບອະນຸຍາດດຳເນີນທຸລະກິດກວດສອບ ຊົ່ວຄາວຕາມທີ່ກຳນົດໄວ້ໃນກົດໝາຍວ່າດ້ວຍ ການກວດສອບອິດສະລະ ແລະ ມາດຕາ 22, 23 ຂອງຂໍ້ຕົກລົງສະບັບນີ້ ນັກກວດສອບຕາມກົດໝາຍທີ່ສັງກັດຢູ່ວິສາຫະກິດດັ່ງກ່າວ ກໍ່ຖືກໂຈະເຊັ່ນດຽວກັນ.

ການໂຈະດັ່ງກ່າວ ຈະຖືກຍົກເລີກເມື່ອເຫັນວ່າ ນັກກວດສອບຕາມກົດໝາຍ ຫຼື ວິສາຫະກິດກວດສອບ ໄດ້ມີການປັບປຸງແກ້ໄຂບັນຫາທີ່ຄົງຄ້າງທີ່ກ່ຽວຂ້ອງໄດ້ ຕາມເວລາທີ່ກຳນົດໄວ້.

**ມາດຕາ 28 ການຖອນໃບອະນຸຍາດເປັນນັກກວດສອບຕາມກົດໝາຍ**

ໃນກໍລະນີທີ່ ວິສາຫະກິດກວດສອບຖືກຖອນໃບອະນຸຍາດດຳເນີນທຸລະກິດກວດສອບ ຕາມທີ່ກຳນົດໄວ້ໃນກົດໝາຍວ່າດ້ວຍ ການກວດສອບອິດສະລະ ແລະ ມາດຕາ 25 ຂອງຂໍ້ຕົກລົງສະບັບນີ້ ນັກກວດສອບຕາມກົດໝາຍທີ່ສັງກັດຢູ່ວິສາຫະກິດດັ່ງກ່າວ ກໍ່ຖືກຖອນເຊັ່ນດຽວກັນ.

ກະຊວງການເງິນ ແຈ້ງເປັນລາຍລັກອັກສອນ ໃຫ້ນັກກວດສອບຕາມກົດໝາຍ, ວິສາຫະກິດກວດສອບ, ສະພາວິຊາຊີບນັກບັນຊີ ແລະ ນັກກວດສອບ ແລະ ແຈ້ງຕໍ່ສາທາລະນະຊົນຜ່ານສື່ມວນຊົນພາຍຫຼັງ ບຸກຄົນ, ນິຕິບຸກຄົນ ຖືກຖອນໃບອະນຸຍາດ.

## ໝວດທີ 7
## ຄ່າທຳນຽມ, ຄ່າບໍລິການ ແລະ ມາດຕະການປັບໃໝ

**ມາດຕາ 29 ຄ່າທຳນຽມ**

ຄ່າທຳນຽມອອກໃບອະນຸຍາດດຳເນີນ ທຸລະກິດບັນຊີ, ທຸລະກິດກວດສອບ ແລະ ນັກກວດສອບຕາມກົດໝາຍ ໃຫ້ປະຕິບັດຕາມທີ່ໄດ້ກຳນົດໄວ້ໃນລັດຖະບັນຍັດ ຂອງປະທານປະເທດ ວ່າດ້ວຍຄ່າທຳນຽມ ແລະ ຄ່າບໍລິການ ທີ່ມີຜົນສັກສິດ ແລະ ປະກາດໃຊ້ ໃນແຕ່ລະໄລຍະ.

ການຄຸ້ມຄອງ ແລະ ການນຳໃຊ້ຄ່າທຳນຽມໃນການອອກອະນຸຍາດດຳເນີນ ວິສາຫະກິດບັນຊີ, ວິສາຫະກິດກວດສອບ ແລະ ນັກກວດສອບຕາມກົດໝາຍ ແມ່ນໃຫ້ປະຕິບັດຕາມລະບຽບ ແລະ ກົດໝາຍວ່າດ້ວຍງົບປະມານແຫ່ງລັດ.

**ມາດຕາ 30 ຄ່າບໍລິການ**

ຄ່າບໍລິການຄົ້ນຄວ້າອອກໃບຕິດຕາມດຳເນີນທຸລະກິດ ບັນຊີ ແລະ ກວດສອບ ໃຫ້ປະຕິບັດຕາມທີ່ໄດ້ກຳນົດໄວ້ໃນລັດຖະບັນຍັດ ຂອງປະທານປະເທດ ວ່າດ້ວຍຄ່າທຳນຽມ ແລະ ຄ່າບໍລິການ ທີ່ມີຜົນສັກສິດ ແລະ ປະກາດໃຊ້ ໃນແຕ່ລະໄລຍະ.

ການຄຸ້ມຄອງ ການນໍາໃຊ້ຄ່າບໍລິການໃນການອອກໃບຕິດຕາມການດໍາເນີນທຸລະກິດ ບັນຊີ ແລະ ກວດສອບ ແມ່ນຕ້ອງປະຕິບັດຕາມລະບຽບ ແລະ ກົດໝາຍວ່າດ້ວຍ ງົບປະມານແຫ່ງລັດ.

**ມາດຕາ 31 ການປະຕິບັດມາດຕະການປັບໃໝ**

ການປະຕິບັດມາດຕະການປັບໃໝຕໍ່ຜູ້ລະເມີດ ຂໍ້ຕົກລົງສະບັບນີ້ ແມ່ນປະຕິບັດຕາມທີ່ກໍານົດໄວ້ໃນກົດໝາຍວ່າດ້ວຍ ການກວດສອບອິດສະລະ.

## ໝວດທີ 8
## ບົດບັນຍັດສຸດທ້າຍ

**ມາດຕາ 32 ການຈັດຕັ້ງປະຕິບັດ**

ກະຊວງການເງິນ, ພະແນກການເງິນແຂວງ, ນະຄອນຫຼວງ, ວິສາຫະກິດບັນຊີ, ວິສາຫະກິດກວດສອບ, ບຸກຄົນ, ນິຕິບຸກຄົນ, ນັກກວດສອບຕາມກົດໝາຍ, ນັກຊ່ຽວຊານບັນຊີ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ຢ່າງເຂັ້ມງວດ.

**ມາດຕາ 33 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ມີຜົນສັກສິດ ພາຍຫຼັງທີ່ໄດ້ລົງລາຍເຊັນ ແລະ ໄດ້ລົງຈົດໝາຍເຫດທາງລັດຖະການ ສິບຫ້າວັນ. ຂໍ້ຕົກລົງສະບັບນີ້ ປ່ຽນແທນບົດແນະນໍາຊົ່ວຄາວ ສະບັບເລກທີ 007/ກງ.ກບຊ, ລົງວັນທີ 3 ມັງກອນ 2014

**ລັດຖະມົນຕີ**

ສົມດີ ດວງດີ